ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ທ່ານ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຳມະນາລະດັບສູງ SEACEN-BIS ຄັ້ງທີ 16 ແລະ ກອງປະຊຸມປະຈຳປີຄະນະບໍລິຫານງານ SEACEN-EXCO ຄັ້ງທີ 22 ລະຫວ່າງ ວັນທີ 18-19 ກັນຍາ 2023 ທີ່ສຽມຣຽບ, ປະເທດ ກຳປູເຈຍ.




ໃນລະຫວ່າງວັນທີ 18-19 ກັນຍາ 2023 ທີ່ຜ່ານມາ, ຄະນະນຳຂອງ ທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍ ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະຜູ້ແທນ ທຫລ ໄດ້ສຳເລັດການເຂົ້າຮ່ວມ "ກອງປະຊຸມສຳມະນາລະດັບສູງຂອງສູນຄົ້ນຄວ້າ ແລະ ຝຶກອົບຮົມສຳລັບທະນາຄານກາງອາຊຽນຕາເວັນອອກສຽງໃຕ້ ຫຼື ສູນຊີເຊນ ແລະ ທະນາຄານເພື່ອການຊຳລະສາກົນ ຄັ້ງທີ 16 (The 16th South East Asian Central Banks Research and Training Center – Bank for International Settlements / SEACEN-BIS High Level Seminar) ແລະ ກອງປະຊຸມປະຈຳປີຄະນະບໍລິຫານງານສູນຊີເຊນ ຄັ້ງທີ 22 (The 22nd Meeting of the SEACEN-Executive Committee / SEACEN EXCO) ຮ່ວມກັບບັນດາທະນາຄານກາງອີກ 19 ປະເທດທີ່ເປັນສະມາຊິກ ຢູ່ ສຽມຣຽບ, ປະເທດ ກຳປູເຈຍ.

ກອງປະຊຸມສຳມະນາ SEACEN-BIS High Level Seminar ຄັ້ງທີ 16 ເປັນເວທີໜຶ່ງທີ່ແນ່ໃສ່ໃຫ້ບັນດາຮອງຜູ້ວ່າການທະນາຄານກາງຂອງປະເທດສະມາຊິກ ແລະ ເຈົ້າໜ້າທີ່ລະດັບສູງຂອງສະຖາບັນການເງິນສາກົນ ໄດ້ແລກປ່ຽນຄວາມຄິດເຫັນ ແລະ ຖອດຖອນບົດຮຽນ ຜ່ານຫົວຂໍ້ສຳຄັນຕ່າງໆ ທີ່ຕິດພັນກັບສະພາບການພົ້ນເດັ່ນຂອງບັນຫາເສດຖະກິດ-ການເງິນໂລກ ທີ່ເກີດຂຶ້ນທັງໃນພາກພື້ນ ແລະ ສາກົນ. ສຳລັບຫົວຂໍ້ປີນີ້ແມ່ນ "Monetary Tightening and

Financial Stability Implications in Asia” ເນື່ອງຈາກຫຼາຍປະເທດສະມາຊິກພວມປະເຊີນກັບຄວາມທ້າທາຍຈາກການປັບນະໂຍບາຍຂອງປະເທດມະຫາອຳນາດ, ຄວາມເຄັ່ງຕຶງທາງການເງິນ ແລະ ຄວາມແຕກແຍກທາງພູມມິສາດທີ່ສົ່ງຜົນກະທົບຕໍ່ສະເຖຍລະພາບທາງດ້ານການເງິນສາກົນ ແລະ ພາກພື້ນ.



ນອກຈາກນີ້, ຍັງໄດ້ເຂົ້າຮ່ວມກອງປະຊຸມປະຈຳປີຄະນະບໍລິຫານງານສູນຊີເຊນ ຄັ້ງທີ 22 ເຊິ່ງເປັນກອງປະຊຸມປະຈຳປີສະເພາະສະມາຊິກຊີເຊນລະດັບຮອງຜູ້ວ່າການທະນາຄານກາງ ທີ່ແນ່ໃສ່ການປຶກສາຫາລືຮ່ວມກັນຕໍ່ກັບແຜນກິດຈະກຳສຳມະນາ/ຝຶກອົບຮົມ, ໂຄງການຄົ້ນຄວ້າ, ແຜນງົບປະມານປະຈຳປີ ລວມເຖິງດ້ານນະໂຍບາຍຕ່າງໆ ແລະ ວຽກບໍລິຫານພາຍໃນຂອງສູນຊີເຊນໃນການພິຈາລະນາຕົກລົງຮັບຮອງກ່ອນນຳສະເໜີຄະນະສະພາບໍລິຫານສູນຊີເຊນ (SEACEN Board of Governor: SEACEN BOG) ເພື່ອຮັບຮອງຕາມຂັ້ນຕອນຕໍ່ໄປ.



ການເຂົ້າຮ່ວມກອງປະຊຸມຄັ້ງນີ້ ແມ່ນມີຄວາມສຳຄັນ ແລະ ເປັນເວທີໜຶ່ງໃນການແລກປ່ຽນຄຳຄິດເຫັນກັບບັນດາທະນາຄານກາງ, ອົງການຈັດຕັ້ງສາກົນ ໂດຍສະເພາະທິດທາງ ແລະ ປະສົບການທາງດ້ານການກຳນົດ ແລະ ນຳໃຊ້ນະໂຍບາຍຕ່າງໆໃນການຮັບມື ແລະ ແກ້ໄຂບັນຫາທາງດ້ານເສດຖະກິດ ແລະ ການເງິນ. ພ້ອມທັງເປັນການຍາດແຍ່ງທາງດ້ານວິຊາການ ໂດຍສະເພາະບັນດາຫົວຂໍ້ຝຶກອົບຮົມ-ສຳມະນາຕ່າງໆ ໃຫ້ແກ່ພະນັກງານເພື່ອເຂົ້າຮ່ວມກອງປະຊຸມສຳມະນາດັ່ງກ່າວ.

**ຂ່າວ ແລະ ພາບ ໂດຍ: ກົມຮ່ວມມືສາກົນ**

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*